**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 157/ສພຂ.ຊຍ
ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ
## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ
## ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ຂໍ້ 3;
- ອີງຕາມ ບົດລາຍງານ ຂອງອົງການໄອຍະການປະຊາຊົນ ສະບັບເລກທີ 470/ອຍກ.ຊຍ, ລົງວັນທີ 25 ທັນວາ 2024 ກ່ຽວກັບການການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຢ່າງເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025 ຂອງອົງການໄອຍະການປະຊາຊົນແຂວງ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນ ແຂວງໄຊຍະບູລີ ຊຸດທີ II ວັນທີ 27 ທັນວາ 2024.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມ ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຈັດຕັ້ງປະຕິບັດມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ສະບັບເລກທີ 07/ສພຂ.ຊຍ, ລົງວັນທີ 13 ມັງກອນ 2024, ໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການໄອຍະການປະຊາຊົນໃນທົ່ວແຂວງ, ຍົກສູງຄຸນນະພາບການຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍຂອງບັນດາອົງການສືບສວນ-ສອບສວນ, ການຄົ້ນຄວ້າແກ້ໄຂຄະດີ ບັນລຸ 98%, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ການດຳເນີນຄະດີຢູ່ສານ ຊຶ່ງສານຂັ້ນຕົ້ນຕັດສິນເອົາຕາມຄຳຖະແຫຼງຂອງໄອຍະການປະຊາຊົນ ທຸກເລື່ອງ, ສຸມໃສ່ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ໄດ້ສ້າງກົນໄກການປະສານງານ ລະຫວ່າງ ອົງການໄອຍະການປະຊາຊົນແຂວງ ກັບ ພະແນກການທີ່ກ່ຽວຂ້ອງ.

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດດັ່ງກ່າວ, ກອງປະຊຸມ ເຫັນວ່າ ຍັງມີບາງດ້ານ ທີ່ອົງການໄອຍະການປະຊາຊົນແຂວງ ຄວນຈະໄດ້ສືບຕໍ່ແກ້ໄຂ ດັ່ງນີ້:

1. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຍັງບໍ່ທັນແຂງແຮງ, ເຂັ້ມງວດ ຕາມທີ່ກົດໝາຍໄດ້ກຳນົດໄວ້ ໂດຍສະເພາະແມ່ນການ



Scanned with CamScanner
CamScanner

ຕິດຕາມກວດກາ ໂດຍໜ້າທີ່, ການຕິດຕາມກວດກາຄວາມສອດຄ່ອງຂອງກົດໝາຍ ແລະ ການອອກນິຕິກຳຕ່າງໆ ຂອງບັນດາພະແນກການຂອງລັດ ຍັງບໍ່ທັນເຮັດໄດ້ດີ; ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ບໍ່ທັນໄດ້ລົງເລິກກວດກາຄວາມຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການໄດ້ກຳນົດໄວ້ ເປັນຕົ້ນ ການຕີລາຄາ, ການປະມູນຂາຍ, ການມອບຊັບ, ການຂຶ້ນບັນຊີເຕົ້າໂຮມຊັບສິນທີ່ສານຮິບເປັນຂອງລັດ, ການປະຕິບັດຄ່າເສຍຫາຍທາງແພ່ງ ແລະ ອື່ນໆ;

2. ການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນ ຕໍ່ການດຳເນີນຄະດີ ຂອງເຈົ້າໜ້າທີ່ ອົງການສືບສວນ-ສອບສວນ ຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດ; ເມື່ອພົບເຫັນການລະເມີດກົດໝາຍ ເປັນຕົ້ນ: ການກັກຕົວ, ການຈັບຕົວ, ການກັກຂັງທີ່ບໍ່ຖືກຕ້ອງຕາມກົດໝາຍ, ແຕ່ອົງການໄອຍະການປະຊາຊົນ ຍັງບໍ່ທັນໄດ້ເປັນເຈົ້າການ ເພື່ອສະເໜີໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ແກ້ໄຂຢ່າງເດັດຂາດ ແລະ ທັນການ;

3. ການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ບາງກໍລະນີ ຍັງບໍ່ທັນຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເປັນຕົ້ນ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ບໍ່ຄົບຕາມ 4 ອົງປະກອບຂອງການກະທຳຜິດທາງອາຍາ;

4. ການໂຄສະນາເຜີຍແຜ່ບັນດານິຕິກຳ ທີ່ອົງການໄອຍະການປະຊາຊົນສູງສຸດໄດ້ອອກໄປນັ້ນ ຍັງບໍ່ທັນເລິກເຊິ່ງ ທົ່ວເຖິງ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການ ແລະ ມາດຕະການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025**

ກອງປະຊຸມ ເຫັນດີເປັນເອກະພາບ ຕໍ່ທິດທາງແຜນການ ປະຈຳປີ 2025 ຊຶ່ງໄດ້ກຳນົດ 5 ຄາດໝາຍສູ້ຊົນ, 8 ວຽກງານຈຸດສຸມ ແລະ 4 ມາດຕະການຈັດຕັ້ງປະຕິບັດ ຂອງອົງການໄອຍະການປະຊາຊົນແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາທິດທາງແຜນການ ປະຈຳປີ 2025 ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ກອງປະຊຸມສະເໜີບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ເອົາໃຈໃສ່ຊີ້ນຳການຜັນຂະຫຍາຍທິດທາງແຜນການ ປີ 2025 ໃຫ້ເປັນແຜນງານ, ໂຄງການລະອຽດພ້ອມທັງຊີ້ນຳ ແລະ ຕິດຕາມຊຸກຍູ້ ອົງການໄອຍະການປະຊາຊົນແຂວງ ແລະ ເຂດໃນການຈັດຕັ້ງປະຕິບັດໃຫ້ສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້;

2. ສຸມໃສ່ປັບປຸງກົງຈັກການຈັດຕັ້ງ ຂອງອົງການໄອຍະການປະຊາຊົນແຕ່ລະຂັ້ນ ໃຫ້ສຳເລັດຕາມແຜນການ, ບຳລຸງ-ກໍ່ສ້າງພະນັກງານໄອຍະການປະຊາຊົນ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ-ຈັນຍາທຳ, ຄວາມຮູ້ຄວາມສາມາດ ໃຫ້ມີຄຸນນະພາບສູງຂຶ້ນ;

3. ຍົກສູງຄຸນນະພາບຂອງການຄົ້ນຄວ້າ ພິຈາລະນາແກ້ໄຂຄະດີ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ສານຕັດສິນເອົາຕາມຄຳຖະແຫຼງ ຂອງອົງການໄອຍະການປະຊາຊົນ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;

4. ເອົາໃຈໃສ່ປັບປຸງກົນໄກ ແລະ ວິທີການ ໃນການຕິດຕາມກວດກາ ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ການຕິດຕາມກວດກາ ການປະຕິບັດຄຳຕັດສິນຂອງສານ ແລະ ການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ໂດຍສຸມໃສ່ແກ້ໄຂບັນຫາການກັກຂັງຜູ້ຖືກຫາ ແລະ ນັກໂທດ ເກີນກຳນົດເວລາ ທີ່ກົດໝາຍກຳນົດໄວ້;

5. ສົມທົບກັບອົງການໄອຍະການປະຊາຊົນສູງສຸດ ໃນການກໍ່ສ້າງອາຄານອົງການໄອຍະການປະຊາຊົນແຂວງ ຫຼັງໃໝ່;

6. ເພີ່ມທະວີ ການຈັດຕັ້ງປະຕິບັດກົນໄກການປະສານງານ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນແຂວງ ມີປະສິດທິພາບ, ມີປະສິດທິຜົນ ແນໃສ່ຍົກສູງຄວາມຮັບຜິດຊອບການເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ນັບມື້ດີຂຶ້ນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການໄອຍະການປະຊາຊົນແຂວງ, ເຂດ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;



Scanned with CamScanner
CamScanner

2. ມອບໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາງົບປະມານ, ພາຫະນະ, ອຸປະກອນ ທີ່ຈຳເປັນໃຫ້ແກ່ອົງການໄອຍະການປະຊາຊົນແຂວງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໜ້າທີ່ການເມືອງ ຕາມກົດໝາຍ ແລະ ແຜນການທີ່ວາງໄວ້;

3. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ



Scanned with CamScanner

CamScanner

2. ມອບໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາງົບປະມານ, ພາຫະນະ, ອຸປະກອນ ທີ່ຈຳເປັນໃຫ້ແກ່ອົງການໄອຍະການປະຊາຊົນແຂວງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໜ້າທີ່ການເມືອງ ຕາມກົດໝາຍ ແລະ ແຜນການທີ່ວາງໄວ້;

3. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພີງ



Scanned with CamScanner

CamScanner